# ປະຫວັດຄວາມເປັນມາຂອງການສຶກສາພາກເອກະຊົນ ນັບແຕ່ປີ 1975 ເປັນຕົ້ນມາ

| | |
|---|---|
| 1975 | ການສຶກສາພາກເອກະຊົນຂອງ ສ ປ ປ ລາວ ໄດ້ກຳເນີດຂຶ້ນກ່ອນ ປີ1975 ແຕ່ບໍ່ທັນໄດ້ຂະຫຍາຍຕົວພໍປານໃດ, ແຕ່ກະຊວງສຶກສາ ໃນສະໄໝນັ້ນໄດ້ຈັດຕັ້ງໜ່ວຍ ງານຮັບຜິດຊອບຂັ້ນສູນກາງເອີ້ນວ່າ: ຫ້ອງການ ການສຶກສາພາກເອກະຊົນ, ເມື່ອເກີດມີການປ່ຽນແປງລະບອບການປົກຄອງ ໃນປີ 1975 ການສຶກສາພາກເອກະຊົນກໍ່ ໄດ້ຢຸດສະຫງັກໄປຊົ່ວໄລຍະໜຶ່ງ. |
| 1986 | ລັດຖະບານໄດ້ກຳນົດແນວທາງປ່ຽນແປງໃໝ່ບັນດາໂຮງຮຽນເອະຊົນ ຄ່ອຍໆຂະຫຍາຍຕົວໄປຄຽງຄູ່ກັບການພັດທະນາ ເສດຖະກິດ-ສັງຄົມ ຕາມເງື່ອນຕົວຈິງຂອງເອກະຊົນໂດຍລັດຖະບານຍັງບໍ່ທັນໄດ້ຈັດຕັ້ງຄຸ້ມຄອງແຕ່ປະການໃດ. |
| 1990 | ເພື່ອຫັນນະໂຍບາຍປ່ຽນແປງໃໝ່ເຂົ້າສູ່ຂົງເຂດວັດທະນາທຳ-ສັງຄົມ ແລະ ການສຶກສາ ແນໃສ່ດຶງດູດເອົາກຳລັງແຮງທົ່ວສັງຄົມມາພັດທະນາຊັບພະຍາກອນມະນຸດ, ລັດຖະບານໄດ້ອອກດຳລັດນາຍົກລັດຖະມົນຕີ ເລກທີ 58/ນຍ. ວ່າດ້ວຍການອະນຸຍາດໃຫ້ສ້າງຕັ້ງໂຮງຮຽນເອກະຊົນຢູ່ ສ ປ ປ ລາວ ແຕ່ລະບຽບການຮອງຮັບຍັງບໍ່ຄົບຖ້ວນ ແລະ ຍັງບໍ່ມີໜ່ວຍງານສະເພາະເພື່ອຊີ້ນຳ,ຄຸ້ມຄອງ. |
| 1992 | ກະຊວງສຶກສາທິການໄດ້ຮັບການສະໜັບສະໜູນດ້ານວິຊາການ ແລະ ການເງິນຈາກທະນາຄານ ພັດທະນາອາຊີ (ADB) ເປັນໂຄງການຊ່ວຍເຫຼືອລ້າ ມູນຄ່າ 200,000 USD ເພື່ອເກັບກຳຂໍ້ມູນ ແລະ ຕີລາຄາສະພາບການສຶກສາພາກເອກະຊົນຢູ່ ສ ປ ປ ລາວ. |
| 1995 | ລັດຖະບານໄດ້ອອກດຳລັດ ເລກທີ 64/ນຍ, ວ່າດ້ວຍການສຶກສາພາກເອກະຊົນ, ພ້ອມກັນນັ້ນລັດຖະບານກໍ່ໄດ້ຮັບທຶນສະໜັບສະໜູນດ້ານວິຊາການ ແລະ ການເງິນ ຈາກທະນາຄານພັດທະນາອາຊີຄັ້ງທີ 2 ໂຄງການຊ່ວຍເຫຼືອລ້ຳ TAN: 2097 - Lao ມູນຄ່າ 400,000 USD ເພື່ອຜັນຂະຫຍາຍເນື້ອໃນຈິດໃຈຂອງດຳລັດນາຍົກ ລັດຖະມົນຕີ ເລກທີ 64/ນຍ. ອັນນີ້ ຈຶ່ງພາໃຫ້ກະຊວງສຶກສາທິການຈັດຕັ້ງຫ້ອງການ ການສຶກສາພາກເອກະຊົນເຊິ່ງມີ ຖານະທຽບເທົ່າກັບກົມໜຶ່ງຂອງກະຊວງສຶກສາທິການ, ເຊິ່ງຫ້ອງການດັ່ງກ່າວໄດ້ກາຍເປັນເສນາທິການໃຫ້ແກ່ລັດຖະມົນຕີກະຊວງສຶກສາທິການ, ກ່ຽວກັບວຽກງານການສຶກສາພາກເອກະຊົນ ມາຮອດປະຈຸບັນ ກົມພວກເຮົາມີລະບຽບຫຼັກການ, ຂໍ້ກຳນົດຕ່າງໆມີການຄຸ້ມຄອງ ແລະ ຄ່ອຍໆຫັນເຂົ້າສູ່ລະບຽບຫຼັກການເທື່ອລະກ້າວ. |
| 2009 | ທະນາຄານພັດທະນາອາຊີ ໄດ້ໃຫ້ທຶນຊ່ວຍເຫຼືອລ້າ ມູນຄ່າ 45,000 USD ເພື່ອສ້າງແຜນຍຸດທະສາດສົ່ງເສີມການສຶກສາພາກເອກະຊົນ ໂດຍຜ່ານໂຄງ ການພັດທະນາການສຶກສາຂັ້ນພື້ນຖານ (BESDP) |
| 2012 | ອີງໃສ່ການປະຕິຮູບການສຶກສາແຫ່ງຊາດ ແລະ ພັດທະນາການສຶກສາໃຫ້ໄດ້ຄຸນນະພາບ ກົມຄຸ້ມຄອງການສຶກສາພາກເອກະຊົນໃນເມື່ອກ່ອນ ໄດ້ປ່ຽນຊື່ມາເປັນຫ້ອງການສະພາທີ່ປຶກສາການສຶກສາພາກເອກະຊົນ |
| | ລາຍຊື່ຜູ້ຮັບຜິດຊອບການສຶກສາພາກເອກະຊົນ ແຕ່ລະໄລຍະ: |
| 1975-89 | ບໍ່ມີໜ່ວຍງານຮັບຜິດຊອບ. |
| 1989-95 | ວຽກງານແຕ່ລະສາຍຂຶ້ນກັບວິຊາານ,ແຕ່ເລີ່ມມີຜູ້ປະສານງານກັບ ທ່ານ ທຳມະລັດ ນາກຄະລັດ ຮອງຫົວໜ້າກົມອາຊີວະສຶກສາ ແລະ ການສຶກສາຊັ້ນສູງ. |
| 1995-96 | ກະຊວງສຶກສາທິການໄດ້ສ້າງຕັ້ງຫ້ອງການ ການສຶກສາພາກເອກະຊົນ ໂດຍມີ:<br>1. ທ່ານ ທອງເພັດ ວົງໂພສີ ຫົວໜ້າຫ້ອງການ<br>2. ທ່ານ ລິດຕະນະ ຊຸມພົນພັກດີ ຮອງຫົວໜ້າຫ້ອງການ<br>3. ທ່ານ ເສັງ ແສງສຸລິຍະ ຮອງຫົວໜ້າຫ້ອງການ |

| | |
|---|---|
| 1999-2000 | ກະຊວງສຶກສາທິການໄດ້ອະນຸຍາດເປັນກົມຄຸ້ມຄອງການສຶກສາພາກເອກະຊົນ ໂດຍມີ:<br>1. ທ່ານ ທອງເພັດ ວົງໂພສີ ຫົວໜ້າກົມ<br>2. ທ່ານ ລິດຕະນະ ຊຸມພົນພັກດີ ຮອງຫົວໜ້າກົມ<br>3. ທ່ານ ສີພັນດອນ ດວງພະຈັນ ຮອງຫົວໜ້າກົມ |
| 2001-2002 | 1. ທ່ານ ລິດຕະນາ ຊຸມພົນພັກດີ ຫົວໜ້າກົມ<br>2. ທ່ານ ກົ່ງ ໄຊຍະສານ ຮອງຫົວໜ້າກົມ |
| 2003-2005 | 1. ທ່ານ ກົ່ງ ໄຊຍະສານ ວ່າການຫົວໜ້າກົມ<br>2. ທ່ານ ສົມຈິດ ປະເສີດສັກ ຮອງຫົວໜ້າກົມ |
| 2006 | 1. ທ່ານ ສົມຈິດ ປະເສີດສັກ ວ່າການຫົວໜ້າກົມ |
| 2007 | 1. ທ່ານ ລີຝູງ ຫົວໜ້າກົມ<br>2. ທ່ານ ຄຳພອນໄຊສົມພູ ຮອງຫົວໜ້າກົມ |
| 2008-2012 | 1. ທ່ານ ດຣ ກ້າ ສະເຫຼີມສຸກ ຫົວໜ້າກົມ<br>2. ທ່ານ ຄຳພອນ ໄຊສົມພູ ຮອງຫົວໜ້າກົມ<br>3. ທ່ານ ພົມມາ ຄຳກີແກ້ວ ຮອງຫົວໜ້າກົມ |
| 2012-2013 | 1. ທ່ານ ຄຳພອນ ໄຊສົມພູ ຫົວໜ້າຫ້ອງການ ສປອ<br>2. ທ່ານ ອານັນ ອາລຸນສະຫວັດ ຮອງຫົວໜ້າຫ້ອງການ ສປອ<br>3. ທ່ານ ພູວອນ ແກ້ວພູວົງ ຮອງຫົວໜ້າຫ້ອງການ ສປອ<br>4. ທ່ານ ນ. ວຽງສະຫວັນ ວິລະສິດ ຮອງຫົວໜ້າຫ້ອງການ ສປອ |